THE COMMONWEALTH OF MASSACHUSETTS
EXECUTIVE OFFICE OF LABOR AND WORKFORCE DEVELOPMENT
DEPARTMENT OF UNEMPLOYMENT ASSISTANCE

MAURA HEALEY
GOVERNOR

KIM DRISCOLL
LIEUTENANT GOVERNOR

LAUREN E. JONES
SECRETARY

KATIE DISHNICA
DIRECTOR

# ຄຳຖາມທີ່ຖາມເລື້ອຍໆ - ການປ່ຽນແປງໃນສິດປະໂຫຍດ UI ສູງສຸດທີ່ອະນຸຍາດ

**ຄຳຖາມ: ເປັນຫຍັງຈຳນວນອາທິດສູງສຸດທີ່ອະນຸຍາດໃນການຂໍຮັບສິດປະໂຫຍດເງິນຊ່ວຍເຫຼືອການຫວ່າງງານໃໝ່ຈຶ່ງຫຼຸດລົງຈາກ 30 ອາທິດເປັນ 26 ອາທິດ.**

**ຄຳຕອບ:** ເມື່ອບໍ່ດົນມານີ້ ອັດຕາການຫວ່າງງານສະເລ່ຍໃນສິບສອງເດືອນທີ່ວັດໄດ້ໃນທຸກເຂດເມືອງໃຫຍ່ໃນລັດ Massachusetts ທັງໝົດແມ່ນສູງເຖິງ 5.1% ຫຼືຕໍ່າກວ່າ. ລັດຖະບັນຍັດປະກັນການຫວ່າງງານລັດ Massachusetts (The Massachusetts Unemployment Insurance statute, G.L. c. 151A, §30(a) ກຳນົດວ່າຖ້າອັດຕາການຫວ່າງງານສະເລ່ຍໃນສິບສອງເດືອນເທົ່າກັບຫຼືຕໍ່າກວ່າ 5.1% ທີ່ວັດໄດ້ໃນທຸກເຂດເມືອງໃຫຍ່ ຈະມີການປັບໄລຍະເວລາໃນການໄດ້ຮັບສິດປະໂຫຍດສູງສຸດທີ່ອະນຸຍາດໂດຍອັດຕະໂນມັດສຳລັບການຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານໃໝ່ຈາກ 30 ອາທິດເປັນ 26 ອາທິດ.

**ຄຳຖາມ: ການປ່ຽນແປງຈະມີຜົນເມື່ອໃດ?**

**ຄຳຕອບ:** ການປ່ຽນແປງນີ້ຈະມີຜົນສຳລັບການຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານໃໝ່ທີ່ຍື່ນໃນວັນທີ ຫຼື ພາຍຫຼັງວັນທີ 2 ກໍລະກົດ 2023.

**ຄຳຖາມ: ຂ້າພະເຈົ້າຈຳເປັນຕ້ອງດຳເນີນການຫຍັງບໍ່?**

**ຄຳຕອບ:** ບໍ່. ຜູ້ຍື່ນຄຳຮ້ອງຂໍຄວນຈະຍື່ນຂໍເງິນຊ່ວຍເຫຼືອແລະກອກໃບຢັ້ງຢືນສິດແຕ່ລະອາທິດຜ່ານ UI Online ທີ່ເຂົາເຈົ້າເຮັດຕາມປົກກະຕິ.

**ຄຳຖາມ: ຈະເກີດຫຍັງຂຶ້ນກັບການຂໍເງິນຊ່ວຍເຫຼືອຂອງຂ້າພະເຈົ້າຖ້າໄດ້ມີການຍື່ນກ່ອນວັນທີ 7/2/2023?**

**ຄຳຕອບ:** ສະເພາະບຸກຄົນທີ່ຍື່ນຄຳຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານໃໝ່ໃນວັນທີ ຫຼືພາຍຫຼັງວັນທີ 2 ກໍລະກົດ 2023 ເທົ່ານັ້ນທີ່ຈະຢູ່ພາຍໃຕ້ໄລຍະເວລາໄດ້ຮັບສິດປະໂຫຍດສູງສຸດທີ່ປັບໃໝ່ແລ້ວທີ່ອະນຸຍາດເປັນ 26 ອາທິດ. ຜູ້ຍື່ນຄຳຮ້ອງທຸກຄົນທີ່ຍື່ນຂໍເງິນຊ່ວຍເຫຼືອໃໝ່ກ່ອນວັນທີ່ນັ້ນຈະຍັງຄົງຮັກສາໄລຍະເວລາທີ່ຈະໄດ້ຮັບສິດປະໂຫຍດສູງສຸດທີ່ໄດ້ຮັບອະນຸຍາດເປັນເວລາ 30 ອາທິດຕະຫຼອດໄລຍະເວລາໃນການຮ້ອງຂໍເງິນຊ່ວຍເຫຼືອ.

**ຄຳຖາມ: ຈະເກີດຫຍັງຂຶ້ນຖ້າອັດຕາການຫວ່າງງານເພີ່ມຂຶ້ນໃນລະຫວ່າງທີ່ຂ້າພະເຈົ້າຮ້ອງຂໍເງິນຊ່ວຍເຫຼືອ?**

**ຄຳຕອບ:** ພາຍໃຕ້ລັດຖະບັນຍັດນີ້ ຖ້າອັດຕາການຫວ່າງງານເພີ່ມຂຶ້ນສູງກວ່າ 5.1% ທີ່ວັດໄດ້ໃນເຂດເມືອງໃຫຍ່ແຫ່ງໃດໃນລັດ Massachusetts ຜູ້ຍື່ນຄຳຮ້ອງທຸກຄົນອາດຈະມີສິດໄດ້ຮັບສິດປະໂຫຍດເປັນໄລຍະເວລາສູງສຸດ 30 ອາທິດ ໂດຍບໍ່ຄຳນຶງເຖິງວັນທີ່ຍື່ນຄັ້ງທຳອິດ.

**ຄຳຖາມ: ການປ່ຽນແປງຈຳນວນອາທິດທີ່ໄດ້ຮັບສິດປະໂຫຍດທີ່ອະນຸຍາດຈະເຮັດໃຫ້ຈຳນວນສິດປະໂຫຍດປະຈຳອາທິດຂອງຂ້າພະເຈົ້າຫຼຸດລົງບໍ່?**

**ຄຳຕອບ:** ລັດຖະບັນຍັດບໍ່ໄດ້ປ່ຽນແປງສູດການຄິດໄລ່ຈຳນວນສິດປະໂຫຍດປະຈຳອາທິດ.